ທຄຕລ BCEL

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

# ພິທີມອບ-ຮັບເຂົ້າສານຊ່ວຍເຫຼືອ ຜູ້ປະສົບໄພນໍ້າຖ້ວມໃນບັນດາເມືອງຕ່າງໆ ທີ່ແຂວງ ສະຫວັນນະເຂດ ລວມມູນຄ່າ 100.000.000 ກີບ.




ໃນວັນທີ 30/10/2020 ທີ່ຜ່ານມາ ຢູ່ທີ່ ຫ້ອງວ່າການປົກຄອງແຂວງ ສະຫວັນນະເຂດ ໄດ້ມີພິທີມອບ-ຮັບເຂົ້າສານ ຊ່ວຍເຫຼືອ ຜູ້ປະສົບໄພນໍ້າຖ້ວມໃນບັນດາເມືອງຕ່າງໆ ທີ່ແຂວງສະຫວັນນະເຂດ ລວມມູນຄ່າ 100.000.000 ກີບ. ຕາງໜ້າມອບການຊ່ວຍເຫຼືອໃນຄັ້ງນີ້ໂດຍ **ທ່ານ ນາງ ຈັນຖະໜອມ ມູນລາດຊະວົງ ຄະນະພັກຮາກຖານ ຫົວໜ້າ ທຄຕລ ສາຂາສະຫວັນນະເຂດ**, ຕາງໜ້າຮັບໂດຍ ທ່ານ ທ່ອນແກ້ວ ພຸດທະໄກສອນ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງ ສະຫວັນນະເຂດ.

ການຊ່ວຍເຫຼືອດັ່ງກ່າວ ທ່ານຮອງເຈົ້າແຂວງກໍ່ໄດ້ກ່າວສະແດງຄວາມຂອບໃຈມາຍັງ ຄະນະການນຳຂອງ ທຄຕລ ທຸກຂັ້ນຕະຫຼອດຮອດພະນັກງານທັງໝົດຂອງ ທຄຕລ ທີ່ໄດ້ໃຫ້ການຊ່ວຍເຫຼືອໃນຄັ້ງນີ້ ແລະ ຈະນຳການຊ່ວຍເຫຼືອດັ່ງກ່າວ ໃຫ້ເຖິງມືພໍ່ແມ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບໃຫ້ໄວທີ່ສຸດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Call center: 1555, Facebook & Instagram: BCEL Bank, Website: www.bcel.com.la